WISe
Wraparound with Intensive Services

# WISe: Youth

## WISe ແມ່ນຫຍັງກັນແທ້?

WISe ແມ່ນວິທີການແນວໃຫມ່ເພື່ອຈະຊ່ວຍເຫລືອຊາວຫນຸ່ມຜູ້ທີ່ມີບັນຫານຳສຸຂະພາບໂຣກຈິດໃຫ້ປະສົບຜົນສຳເຣັດຢູ່ເຮືອນ, ຢູ່ໃນໂຮງຮຽນ, ແລະ ຢູ່ໃນຊຸມນຸມຊົນ. ໂດຍຜ່ານໂຄງການ WISe, ຊາວຫນຸ່ມຈະໄດ້ຮັບການບຳບັດຮັກສາໂຣກ ແລະ ການບໍຣິການ ແລະ ການອູ້ມຊູແນວອື່ນໆເພື່ອຈະຊ່ວຍເຂົາເຈົ້າໃຫ້ບັນລຸເປົ້າຫມາຍຂອງເຂົາເຈົ້າ. WISe ໃຊ້ວິທີການແບບຄະນະທີມງານ, ແລະ ຊາວຫນຸ່ມຜູ້ທີ່ເຂົ້າຮ່ວມຢູ່ໃນ WISe ຈະມີຄະນະທີມງານທີ່ເຮັດວຽກນຳເຂົາເຈົ້າ ແລະ ຊ່ວຍປະສານງານການບໍຣິການ ແລະ ການອູ້ມຊູ.

## WISe ແຕກຕ່າງຈາກການບໍຣິການແນວອື່ນຢ່າງໃດ?

### ປາກສຽງ ແລະ ທາງເລືອກຂອງຊາວຫນຸ່ມ

ຄະນະທີມງານຂອງ WISe ຍັງຮັບຮູ້ຈັກອີກຄືກັນວ່າຊາວຫນຸ່ມຕ້ອງການຢາກຈະມີປາກສຽງ ແລະ ທາງເລືອກໃນການປິ່ນປົວຂອງເຂົາເຈົ້າ. ອັນນີ້ຫມາຍຄວາມວ່າຊາວຫນຸ່ມໄດ້ຮັບຣາຍຣະອຽດທີ່ເຂົາເຈົ້າຕ້ອງການເພື່ອຈະເພື່ອຈະເພີ້ມກຳລັງແຮງທີ່ຈະທຳການຕັດສິນໃຈທີ່ດີກ່ຽວກັບການເບິ່ງແຍງດູແລ ແລະ ການປິ່ນປົວຂອງເຂົາເຈົ້າໃນການດຳເນີນງານຂອງ WISe.

### ກໍ່ຕັ້ງ ແລະ ບັນລຸເປົ້າຫມາຍຂອງທ່ານເອງ

ດ້ວຍການອູ້ມຊູຈາກຄະນະທີມງານ WISe ຂອງທ່ານ, ທ່ານຈະກໍ່ຕັ້ງເປົ້າຫມາຍຂອງທ່ານເອງ ແລະແລ້ວວາງແຜນທີ່ຈະບັນລຸຜົນສຳເຣັດ.

### ສະເລີມສະລອງຄວາມເຂັ້ມແຂງຂອງທ່ານ

ຄະນະທີມງານ WISe ຂອງທ່ານຈະກໍ່ສ້າງໃສ່ສິ່ງທີ່ດຳເນີນໄດ້ດີຢູ່ໃນຊີວິດຂອງທ່ານ ແລະ ສິ່ງທີ່ທ່ານເກັ່ງ, ບໍ່ແມ່ນອຸບປະສັກທີ່ທ່ານກຳລັງປະເຊີນຫນ້າຢູ່.

### ໄດ້ຮັບຄວາມຊ່ວຍເຫລືອເມື່ອເວລາ ແລະ ບ່ອນທີ່ທ່ານຕ້ອງການມັນ

ການບໍຣິການຍາມພາວະສຸກເສີນຂອງ WISe ຈະມີໄວ້ໃຫ້ຕະລອດ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ. ທ່ານຈະສາມາດທີ່ຈະໄດ້ຮັບຄວາມຊ່ວຍເຫລືອໃນຣະຫວ່າງເວລາຫຍຸ້ງຍາກຈາກຄົນໃດຄົນນຶ່ງຜູ້ທີ່ເຂົ້າໃຈສະພາບການຂອງທ່ານແລະສາມາດທີ່ຈະມາເຮືອນຂອງຂອງທ່ານ, ໂຮງຮຽນ, ຫລື ບໍ່ວ່າບ່ອນໃດທີ່ທ່ານຈະສະບາຍໃຈທີ່ສຸດ.

## ແມ່ນໃຜແດ່ສາມາດໄດ້ຮັບ WISe?

ເພື່ອຈະໄດ້ຮັບ WISe, ທ່ານຕ້ອງມີອາຍຸຕ່ຳກວ່າ 21 ປີ ແລະ ມີເງື່ອນໄຂໄດ້ຮັບ Medicaid.

ຊາວຫນຸ່ມທຸກໆຄົນອາຍຸກາຍເກີນ 13 ປີ ສາມາດຂໍເອົາການກວດກັ່ນເບິ່ງ WISe ເພື່ອຈະຮູ້ຈັກວ່າເຂົາເຈົ້າມີເງື່ອນໄຂໄດ້ຮັບ ຫລື ບໍ່ (ຖ້າຫາກວ່າທ່ານມີອາຍຸຕ່ຳກວ່າ 13 ປີ, ທ່ານຕ້ອງມີຄຳອະນຸຍາດຈາກພໍ່ແມ່ ຫລື ຜູ້ປົກຄອງຂອງທ່ານກ່ອນ). ທ່ານຍັງສາມາດຊອກຫາຣາຍຣະອຽດໄດ້ອີກຄືກັນກ່ຽວກັບ WISe ແລະ ພະແນກບໍຣິການ ແລະ ການອູ້ມຊູສຸຂະພາບໂຣກຈິດອື່ນໆທີ່ມີໄວ້ໃຫ້ຢູ່ໃນເຂດຂອງທ່ານຢູ່ທີ່ນີ້ໄດ້:
https://www.hca.wa.gov/wise-overview ຫລື ໂດຍການໂທຫາສາຍ Recovery Helpline ເລກໂທຟຣີໄດ້ທີ່ 866-789-1511.

**WISe** *ແມ່ນວິທີການເຂັ້ມຂົ້ນ, ລວມກັນຂອງການເຮັດວຽກນຳບຸກຄົນຜູ້ທີ່ມີຄວາມຕ້ອງການສັບສົນ (ໂດຍສ່ວນຫລາຍແລ້ວແມ່ນເດັກນ້ອຍ, ຊາວຫນຸ່ມ, ແລະ ຄອບຄົວຂອງເຂົາເຈົ້າ) ເພື່ອວ່າເຂົາເຈົ້າສາມາດອາສັຍຢູ່ໃນເຮືອນຂອງເຂົາເຈົ້າ ແລະ ຊຸມນຸມຊົນ ແລະ ເຂົ້າໃຈຄວາມຫວັງ ແລະ ຄວາມຝັນຂອງເຂົາເຈົ້າ.*

## ຕ້ອງການຢາກຈະພົວພັນນຳບໍ່?

ປາກສຽງຂອງທ່ານສາມາດສົ່ງເສີມການບໍຣິການສຳລັບຊາວຫນຸ່ມໃຫ້ດີຂື້ນໄດ້. Family, Youth, System Partner Round Tables (FYSPRTs) ເປັນພາກສ່ວນສຳຄັນຂອງໂຄງຮ່າງປົກຄອງທີ່ເຮັດວຽກເພື່ອຈະທຳການປັບປຸງແກ້ໄຂໃສ່ຣະບົບການທຳງານ.

ຮຽນຮູ້ເພີ້ມເຕີມໄດ້ຢູ່ທີ່ນີ້:
https://www.hca.wa.gov/fysprt



Washington State Health Care Authority